**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມກົມ

ຫ້ອງການ

ເລກທີ 1208---- /ຫກ

ນະຄອນຫຼວງວຽງຈັນ, ວັນທີ 13 / 04 / 23

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຈະຮັບເອກະສານການຂໍອະນຸຍາດດໍາເນີນການບໍລິການຈັດຫາງານຊົ່ວຄາວ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0888 / ຮສສ, ລົງວັນທີ 18 ມີນາ 2022;
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1481/ຫສນຍ, ລົງວັນທີ 14 ຕຸລາ 2022 ຕອນທ້າຍຂໍ້ທີ 1 ທີ່ຊີ້ນໍາວ່າ ໃຫ້ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ປະເມີນຄືນບັນດາບໍລິສັດຈັດຫາງານ ຖ້າບໍລິສັດໃດຫາກບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ແມ່ນໃຫ້ກ້າວໄປສູ່ການຖອນໃບອະນຸຍາດ.

ເພື່ອເຮັດໃຫ້ ການຈັດຫາງານຂອງບັນດາວິສາຫະກິດຈັດຫາງານ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ອະນຸຍາດໄປແລ້ວ ໄດ້ຮັບການປັບປຸງ ເພື່ອຫັນເຂົ້າສູ່ການມີຄຸນນະພາບສູງຂຶ້ນ ຕາມທິດຊີ້ນໍາຂອງຂັ້ນເທິງ ທີ່ຖືເອົາຄຸນນະພາບຂອງການໃຫ້ການບໍລິການເປັນກົກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີຄວາມຈໍາເປັນຕ້ອງໄດ້ດໍາເນີນການປະເມີນຈັດລະດັບການດໍາເນີນທຸລະກິດຂອງບັນດາບໍລິສັດຈັດຫາງານທັງໝົດທີ່ກໍາລັງເຄື່ອນໄຫວຢູ່ໃນປະຈຸບັນ ໂດຍຈະເລີ່ມແຕ່ວັນທີ 02 ພຶດສະພາ 2023 ເປັນຕົ້ນໄປ ຈົນຮອດວັນທີ 31 ກໍລະກົດ 2023 ເປັນຢ່າງໄວ.

ຫ້ອງການ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ແຈ້ງການມາຍັງບັນດາທ່ານ ແລະ ທຸກພາກສ່ວນຊາບວ່າ: ໃນຊ່ວງໄລຍະເວລາດັ່ງກ່າວມາຂ້າງເທິງນັ້ນ ກະຊວງຈະໃຈະການຮັບເອກະສານ ທີ່ມີຈຸດປະສົງ ເພື່ອສະເໜີຂໍອະນຸຍາດສ້າງຕັ້ງ ຫຼື ດໍາເນີນທຸລະກິດກ່ຽວກັບການບໍລິການຈັດຫາງານໄປກ່ອນ ເມື່ອສິ້ນສຸດເວລາຂອງການໃຈະ ຈະໄດ້ແຈ້ງໃຫ້ຊາບຢ່າງເປັນທາງການກ່ຽວກັບການສືບຕໍ່ຮັບການສະເໜີຂໍອະນຸຍາດຕາມລະບຽບການທີ່ມີຢູ່. ສໍາລັບການສະເໜີມາກ່ອນວັນທີ 02 ພຶດສະພາ 2023 ກະຊວງຈະສືບຕໍ່ພິຈາລະນາຕາມຄວາມເໝາະສົມກັບສະພາບ ແລະເງື່ອນໄຂຕາມຄວາມພ້ອມຕົວຈິງຂອງຜູ້ສະເໜີ ແລະ ຕາມລະບຽບການທີ່ມີຢູ່.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຮ່ວມມືຈາກ ທຸກທ່ານ, ທຸກພາກສ່ວນຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ບຸນຍອດ ຈັນທະວອນ